# ທ່ານຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ຕ້ອນຮັບແຂກຫລັກຊັບຂອງໄທ



ຂ່າວ: ຣັດສະໝີ ດວງສັດຈະ

ທ່ານ ພູເພັດ ຄຳພູນວົງ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ໄດ້ໃຫ້ກຽດຕ້ອນຮັບຄະນະບໍລິສັດຫຼັກຊັບ ທິສະໂກຈຳກັດ ຂອງປະເທດໄທ ເຊິ່ງນຳໂດຍ ທ່ານ ໄພບູນ ນະລິນທະລັງກູນ ກຳມະການຜູ້ຈັດການໃຫຍ່ບໍລິສັດຫຼັກຊັບທິສະໂກຈຳກັດພ້ອມຄະນະທີ່ຫ້ອງຮັບແຂກທະນາຄານ ແຫ່ງ ສປປ ລາວ ນະຄອນຫຼວງວຽງຈັນ ເມື່ອຕອນແລງ ຂອງວັນທີ 26 ມັງກອນ ຜ່ານມາ.

ໃນໂອກາດດັ່ງກ່າວ ທ່ານກຳມະການຜູ້ຈັດການໃຫຍ່ບໍລິສັດດັ່ງກ່າວກໍ່ໄດ້ແຈ້ງຜົນຂອງການເຄື່ອນໄຫວເຮັດວຽກຢູ່ ສປປ ລາວ ໂດຍສະເພາະແມ່ນການພົວພັນເພື່ອຂະຫຍາຍຄວາມຮ່ວມມືທາງດ້ານທຸລະກິດກັບທະນາຄານທຸລະກິດ ແລະ ບໍລິສັດຫຼັກຊັບຕ່າງປະເທດຂອງທະນາຄານພົງສະຫວັນ ການພົບປະກັນລະຫວ່າງແຂກ ແລະ ເຈົ້າພາບໄດ້ດຳເນີນໄປດ້ວຍບັນຍາກາດອັນດີ.

ບໍລິສັດຫຼັກຊັບທິສະໂກຈຳກັດ (TISCO) ເປັນສະຖາບັນການເງິນທີ່ເກົ່າແກ່ແຫ່ງໜຶ່ງຂອງໄທທີ່ມີອາຍຸ 40 ປີ ແລະ ກໍ່ເປັນໜຶ່ງໃນສະມາຊິກຜູ້ກໍ່ຕັ້ງຕະຫຼາດຫຼັກຊັບແຫ່ງປະເທດໄທ ແລະ ກຸ່ມບໍລິສັດດັ່ງກ່າວໄດ້ໃຫ້ການບໍລິການດ້ານເງິນທຶນຫຼັກຊັບ ແລະ ການຈັດກອງທຶນແບບຄົບວົງຈອນ, ບໍລິສັດຍັງໃຫ້ບໍລິການປຶກສາດ້ານການລົງທຶນ, ເປັນໂບກເກີ້, ເປັນທີ່ປຶກສາດ້ານເຕັກນິກໃນການຫັນເປັນບໍລິສັດເອກະຊົນ, ການລວມ ແລະ ການຊື້ຫຸ້ນຂອງບໍລິສັດຫຸ້ນ ແລະ ບໍລິສັດດັ່ງກ່າວຍັງສົນໃຈ ແລະ ຈະຈັບມືພັດທະນາຕະຫຼາດຫຼັກຊັບຂອງລາວໃນອານາຄົດໃກ້ໆ.